LALCO
LAO ASEAN LEASING PUBLIC COMPANY

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຂອງ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ

ວັນ, ເວລາ ແລະ ສະຖານທີ່

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 28 ເມສາ 2022 ເວລາ 13:30 ຕອນແລງ, ທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຊັ້ນ 3, ຕຶກ NNN, ຖະໜົນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ.

ເລີ້ມເປີດກອງປະຊຸມ

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ເປັນວັນປິດປຶ້ມເພື່ອ ກຳນົດຜູ້ຖືຫຸ້ນຂອງບໍລິສັດ ທີ່ມີສິດເຂົ້າຮ່ວມ ກອງປະຊຸມສາມັນຜູ້ຖືຮຸ້ນ ວັນທີ 12 ເມສາ 2022, ມີທຶນຈົດທະບຽນທີ່ຖອກແລ້ວ 30,150,000,000ກີບ, ເຊິ່ງເປັນ ຕົວແທນໃຫ້ແກ່ 301,500,000 ຮຸ້ນທີ່ອອກໃຫ້. ໃນຕອນເລີ່ມຕົ້ນຂອງກອງປະຊຸມ, ປະກອບມີຜູ້ຖືຫຸ້ນ 8 ຄົນ ເຂົ້າ ຮ່ວມໂດຍ ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມແທນ, ເຊິ່ງລວມເປັນ 297,880,600 ຮຸ້ນ ຫຼື 98,80%, ເຊິ່ງຫຼາຍ ກວ່າເຄິ່ງໜຶ່ງ ຂອງຮຸ້ນທັງໝົດ ທີ່ອອກໃຫ້.

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ຜູ້ທີ່ໄດ້ຮັບມອບໝາຍ ຈາກທ່ານນາງ Yuki Scott, ປະທານ ສະມາຊິກສະພາບໍລິຫານ ໃຫ້ເປັນປະທານກອງປະຊຸມ ແລະ ປະກາດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ທີ່ຈັດຂຶ້ນ ໂດຍການຕ້ອນຮັບທຸກພາກສ່ວນ ທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຫຸ້ນປະຈຳປີ 2021 ຊຶ່ງມີລາຍລະອຽດດັ່ງນີ້:

ທ່ານ ແອັດນັນ ການີ ປະທານ ກອງປະຊຸມ ເປັນຜູ້ແນະນຳ ຜູ້ອຳນວຍການຂອງບໍລິສັດ, ຜູ້ອຳນວຍການຝ່າຍ ບໍລິຫານ ແລະ ພະນັກງານ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມາຊິກສະພາບໍລິຫານ

ຊື່	ຕຳແໜ່ງ	ມອບໝາຍໃຫ້
ທ່ານນາງ. Yuki Scott	ປະທານສະພາບໍລິຫານ	ທ່ານ ແອັດນັນ ການີ
ທ່ານ. Mitsuteru Nagaya	ຮອງປະທານສະພາບໍລິຫານ	ທ່ານນາງ ສຸກດາວັນ
ທ່ານ. Shingo Yamanaka	ສະມາຊິກ	ທ່ານນາງ ປິ່ນແກ້ວ ບຸນຈັນດີ

LALCO
LAO ASEAN LEASING PUBLIC COMPANY

ທ່ານ. Hirofumi Inada	ສະມາຊິກ	ທ່ານນາງ ນິໂຄ ໄຄລ ນາເລ
ທ່ານນາງ. Harumi Ide	ສະມາຊິກ	ທ່ານ ຄຳປະເສີດ ວັນໂນລາດ

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ທ່ານນາງ. ວັນນະພອນ ສຸນັນທາ	ຜູ້ຕ່າງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານ ວົງແກ້ວ ຂະທຸມພົນ	ຜູ້ຕ່າງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານ ຈອນນີ້ ແພງວົງສາ	ຜູ້ຕ່າງໜ້າຈາກ ຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານນາງ. ເກສອນ ເທບພາສຸວັນ	ຜູ້ຖືຮຸ້ນລາຍຍ່ອຍຂອງ ລອຊ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ

ພິທີກອນ	ທ່ານ ແອັດນັນ ການີ / ທ່ານນາງ ປິ່ນແກ້ວ ບຸນຈັນດີ
ພະນັກງານຕ້ອນຮັບ	ທ່ານນາງ. ຈີ້ເຮີ
ພະນັກງານກວດສອບເອກະສານ	ທ່ານນາງ. ລູ້ລີ ລີເລ່ຍນູ
ພະນັກງານລົງທະບຽນ	ທ່ານນາງ. ຈິນຕະນາ ນາຄະປະເສີດ
ກອງເລຂາ	ທ່ານນາງ. ລຸນນີ ແກ້ວປະທຸມ
ພະນັກງານລົງຄະແນນສຽງ	ທ່ານ ໄຊພອນ ໄຊຍະວົງ
ພະນັກງານລະບົບອີເລັກໂຕນິກ	ທ່ານ ໄຊພອນ ໄຊຍະວົງ

LALCO
LAO ASEAN LEASING PUBLIC COMPANY

ຫລັງຈາກນັ້ນ, ພິທີກອນ ໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມແລະລາຍງານແຕ່ລະວາລະຂອງກອງປະຊຸມດັ່ງຕໍ່ໄປນີ້:

1. **ການລົງຄະແນນສຽງ:**

- ທ່ານຜູ້ຖືຫຸ້ນໜຶ່ງທ່ານ ມີຄະແນນສຽງເຊິ່ງເທົ່າກັບຈຳນວນຮຸ້ນທັງໝົດ ຂອງທ່ານ; ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງແຕ່ວາລະ, ປະທານໄດ້ ຈະໄດ້ສອບຖາມຖ້າວ່າມີຜູ້ຖືຫຸ້ນຜູ້ທີ່ບໍ່ເຫັນດີ ຫຼືບໍ່ຮອງຮອງ ໃນວາລະນັ້ນ. ໃນກໍລະນີທີ່ ບໍ່ເຫັນດີຫລືບໍ່ຮັບຮອງ ແມ່ນໃຫ້ ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ເຊິ່ງໄດ້ແຈກຢາຍໂດຍເຈົ້າໜ້າທີ່ກ່ອນການປະຊຸມ ພ້ອມທັງຕ້ອງໄດ້ຍົກບັດຂຶ້ນມາຈົນກວ່າເຈົ້າໜ້າທີ່ຈະເກັບກຳຂໍ້ມູນ ເພື່ອໄປກວດນັບຄະແນນສຽງໃນວາລະນັ້ນ ແລະ ສຳລັບຜູ້ຖືຫຸ້ນທີ່ບໍ່ຍົກບັດຂຶ້ນມາ, ຖືວ່າຜູ້ຖືຮຸ້ນດັ່ງກ່າວເຫັນດີກັບມະຕິທີ່ໄດ້ສະເໜີໃນກອງປະຊຸມ.
- ສຳລັບຜູ້ຖືຫຸ້ນມອບສິດ ໃຫ້ເປັນຕົວແທນເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ຖືຫຸ້ນຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງດັ່ງທີ່ຜູ້ຖືຫຸ້ນລະບຸໄວ້ໃນໃບມອບສິດ ໄປບັນທຶກຄະນແນນໄວ້ລ່ວງໜ້າເປັນທີ່ຮຽບຮ້ອຍແລ້ວ. ເພື່ອອຳນວຍຄວາມສະດວກໃຫ້ຜູ້ຕາງໜ້າ ດັ່ງກ່າວບໍ່ຈຳເປັນຕ້ອງລົງຄະແນນສຽງອີກເທື່ອໜຶ່ງໃນກອງປະຊຸມ.

2. **ການນັບຄະແນນສຽງ**

- ການນັບຄະແນນສຽງຈາກແຕ່ລະວາລະຈະຖືກປະຕິບັດໂດຍອີງໃສ່ຄວາມບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະຜູ້ຕາງໜ້າ ທີ່ເຂົ້າຮ່ວມກອງປະຊຸມ ໂດຍບໍລິສັດ ໄດ້ບັນທຶກລ່ວງໜ້າແລ້ວ ໂດຍການຫັກອອກຈາກຫຸ້ນທັງໝົດ ຂອງຜູ້ຖືຫຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ສຳລັບແຕ່ລະວາລະ.
- ປະທານຈະປະກາດຜົນການລົງຄະແນນສຽງຈາກແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ພາຍຫຼັງທີ່ ການລົງຄະແນນສຽງແຕ່ລະຄັ້ງໄດ້ສິ້ນສຸດລົງ. ໃນກໍລະນີ ຜູ້ຖືຫຸ້ນໄດ້ລົງຄະແນນສຽງບໍ່ເຫັນດີ ພາຍຫຼັງທີ່ປະທານປະກາດຄະແນນສຽງໃຫ້ກອງປະຊຸມເມື່ອວາລະປະຊຸມສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ ນັບເອົາຄະແນນສຽງດັ່ງກ່າວ.

LALCO
LAO ASEAN LEASING PUBLIC COMPANY

ທ່ານປະທານຍັງສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໂດຍລາຍງານແຕ່ລະວາລະ ດັ່ງຕໍ່ໄປນີ້:

ວາລະ 1: ພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນງານຂອງບໍລິສັດ ແລະ ບົດລາຍງານປະຈຳປີ 2021.

ທ່ານ ແອັດນັນ ກາມີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວະລະກອງປະຊຸມ ແລະ ນຳສະເໜີຕໍ່ກອງປະຊຸມກ່ຽວກັບບົດສະຫຼຸບລາຍງານກ່ຽວກັບການດຳເນີນງານຂອງບໍລິສັດ ແລະ ບົດລາຍງານປະຈຳປີ 2021.

ບົດສະຫລຸບຂອງຜົນການດຳເນີນງານ:

ອັດຕາ	ຫົວໜ່ວຍ	31/12/2021	31/12/2020
ລວມລາຍຮັບ	ລ້ານກີບ	377,762	258,030
ກຳໄລສຸດທິ	ລ້ານກີບ	231,980	126,225
ອັດຕາກຳໄລສຸດທິ	%	61.41%	48.92%

ສະພາບໍລິຫານ ໄດ້ ພິຈາລະນາແລ້ວ ແລະ ເຫັນດີສະເໜີ ໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ບົດສະຫຼຸບລາຍງານກ່ຽວກັບການດຳເນີນງານຂອງບໍລິສັດ ແລະ ບົດລາຍງານປະຈຳປີ 2021. ໃນກອງປະຊຸມຈະຮັບຮອງເອົາຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ຫຼັງຈາກສະເໜີໂດຍຫຍໍ້ແລ້ວ ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດບົດສະຫຼຸບລາຍງານກ່ຽວກັບການດຳເນີນງານຂອງບໍລິສັດ ແລະ ບົດລາຍງານປະຈຳປີ 2021.

LALCO
LAO ASEAN LEASING PUBLIC COMPANY

ວາລະ 2: ພິຈາລະນາຮັບຮອງເອົາ ແລະ ອະນຸມັດ ສຳລັບເອກະສານລາຍງານການເງິນຂອງບໍລິສັດ ສຳລັບປີ 2021.

ທ່ານແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວະລະກອງປະຊຸມ. ພິທີກອນເປັນ ຜູ້ນຳສະເໜີວະລະຕໍ່ກອງປະຊຸມດັ່ງຕໍ່ໄປນີ້:

ສຳເນົາເອກະສານລາຍງານການເງິນ ສຳລັບປີ 2021 ໄດ້ສົ່ງໃຫ້ຜູ້ຖືຮຸ້ນ ພ້ອມກັບ ຈົດໝາຍເຊີນ ຂອງກອງປະຊຸມ ຄັ້ງນີ້.

ສະພາບໍລິຫານ ໄດ້ ພິຈາລະນາ ແລະ ເຫັນດີ ສະເໜີ ໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ເອກະສານ ລາຍງານການເງິນຂອງບໍລິສັດ ສຳລັບປີ 2021. ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳ ຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງ ຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດເອກະສານລາຍງານການເງິນຂອງບໍລິສັດ ສຳລັບປີ 2021.

ວາລະ 3: ພິຈາລະນາຮັບຮອງເອົາ ແລະ ອະນຸມັດ ການຂະຫຍາຍທຸລະກິດຕາມແຜນທຸລະກິດຂອງບໍລິສັດ ສຳລັບປີ 2022.

ທ່ານແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວະລະກອງປະຊຸມ ແລະ ເປັນຜູ້ນຳ ສະເໜີວະລະຕໍ່ກອງປະຊຸມ.

ແຜນທຸລະກິດຂອງບໍລິສັດ ສຳລັບປີ 2022ໄດ້ສົ່ງໃຫ້ຜູ້ຖືຮຸ້ນ ພ້ອມກັບ ຈົດໝາຍເຊີນ ຂອງກອງປະຊຸມຄັ້ງນີ້.

ປະທານໄດ້ ກ່າວຄຳເຫັນຂອງສະພາບໍລິຫານ ຊຶ່ງໄດ້ພິຈາລະນາເຫັນດີ ແລະ ໃຫ້ສະເໜີຕໍ່ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການຂະຫຍາຍທຸລະກິດຕາມແຜນທຸລະກິດຂອງບໍລິສັດ ສຳລັບປີ 2022. ໃນກອງປະຊຸມຈະຮັບຮອງ ເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳ ຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງ ຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດການຂະຫຍາຍທຸລະກິດຕາມແຜນທຸລະກິດຂອງບໍລິສັດ ສຳລັບ ປີ 2022.

LALCO
LAO ASEAN LEASING PUBLIC COMPANY

ວາລະ 4: ພິຈາລະນາ ແລະ ອະນຸມັດ ການບໍ່ຈ່າຍເງິນປັນຜົນ ປີ2021.

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວາລະກອງປະຊຸມ, ເປັນຜູ້ນຳສະເໜີວາລະຕໍ່ກອງປະຊຸມດັ່ງຕໍ່ໄປນີ້:

ສະພາບໍລິຫານ ໄດ້ ພິຈາລະນາ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມພິຈາລະນາແລະຮັບຮອງເອົາການບໍ່ຈ່າຍເງິນປັນຜົນ ເພື່ອນຳໃຊ້ເປັນທຶນໃນການດຳເນີນທຸລະກິດ.

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດການບໍ່ຈ່າຍເງິນປັນຜົນ ເພື່ອນຳໃຊ້ເປັນທຶນໃນການດຳເນີນທຸລະກິດ.

ວາລະ 5: ພິຈາລະນາຮັບຮອງເອົາ ແລະ ອະນຸມັດການແຕ່ງຕັ້ງ ບໍລິສັດ Ernst & Young Lao Co. -Ltd ເປັນຜູ້ກວດສອບ ໃນປີ 2022

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວາລະກອງປະຊຸມ, ເປັນຜູ້ນຳສະເໜີວາລະຕໍ່ກອງປະຊຸມ.

ບໍລິສັດ **Ernst & Young Lao Co. Ltd**ແມ່ນໄດ້ເປັນຜູ້ກວດສອບ ບັນຊີ ພາຍນອກຂອງ ບໍລິສັດ ມາໄດ້ຫຼາຍປີ, ເປັນຜູ້ກວດສອບທີ່ມີປະສົບການ ແລະ ເຂົ້າໃຈກ່ຽວກັບການກັບລະບົບການເຄື່ອນໄຫວຂອງບໍລິສັດດີ. ດັ່ງນັ້ນ, ສະພາບໍລິຫານຈຶ່ງມີຄວາມເຊື່ອໝັ້ນ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ບໍລິສັດ **Ernst & Young Lao Co. Ltd** ເປັນຜູ້ກວດສອບ ໃນປີ 2022

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ການແຕ່ງຕັ້ງ ບໍລິສັດ Ernst & Young Lao Co. Ltd ເປັນຜູ້ກວດສອບ ໃນປີ 2022.

LALCO
LAO ASEAN LEASING PUBLIC COMPANY

ວາລະ 6: ພິຈາລະນາຮັບຮອງເອົາ ແລະ ອະນຸມັດການແຕ່ງຕັ້ງຄືນສະມາຊິກສະພາບໍລິຫານທີ່ໝົດວາລະໄປ.

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວາລະກອງປະຊຸມ, ເປັນຜູ້ນຳສະເໜີວາລະຕໍ່ກອງປະຊຸມ.

ສະພາບໍລິຫານ ໄດ້ ພິຈາລະນາ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ແລະ ອະນຸມັດ ການແຕ່ງຕັ້ງຄືນສະມາຊິກສະພາບໍລິຫານທີ່ໝົດວາລະໄປຊຶ່ງມີດັ່ງນີ້:

Mrs. Yuki Scott	ປະທານ ສະພາບໍລິຫານ
Mrs. Harumi Ide	ສະມາຊິກສະພາບໍລິຫານ

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງ ຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ການແຕ່ງຕັ້ງຄືນສະມາຊິກສະພາບໍລິຫານທີ່ໝົດວາລະໄປ.

ວາລະ 7: ພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 5,000,000-10,000,000ໂດລາ

ທ່ານ ແອັດນັນ ການີ, ຜູ້ອຳນວຍການຝ່າຍການເງິນ ໄດ້ຖືກມອບໝາຍໃຫ້ຕອບວາລະກອງປະຊຸມ, ເປັນຜູ້ນຳສະເໜີວາລະຕໍ່ກອງປະຊຸມ.

ອີງຕາມແຜນຂະຫຍາຍທຸລະກິດ ປີ 2022 ແລະ ເພື່ອຕອບສະໜອງການບໍລິການສິນເຊື່ອໃຫ້ທົ່ວເຖິງ, ສະພາບໍລິຫານໄດ້ພິຈາລານະ ແລະ ເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 5,000,000-10,000,000ໂດລາ.

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 5,000,000-10,000,000ໂດລາ.

LALCO
LAO ASEAN LEASING PUBLIC COMPANY

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມ ໃນເວລາ 14:30 ຕອນແລງ.

ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຈາກກອງປະຊຸມ

ທ່ານ ແອັດນັນ ກາມີ

ຜູ້ບັນທຶກ

ນ ລູ້ລີ ລີເລ່ຍນຸ